ໜ່ວຍກໍາມະບານຮາກຖານ ພວຕ ບໍ່ແກ້ວ ສໍາເລັດກອງປະຊຸມໃຫຍ່ຄັ້ງທີ່ 2
Written by Administrator
Thursday, 11 July 2019 01:26 - Last Updated Wednesday, 10 February 2021 07:07
 ກອງປະຊຸມໃຫຍ່ ກຳມະບານຮາກຖານ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ ຄັ້ງທີ່ II ໄດ້ດຳເ
ນີນເປັນເວລາ
1
ຕອນ
,
ຂອງວັນທີ່
9
ກໍລະກົດ
2019
ທີ່ຫ້ອງປະຊຸມພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ ໂດຍການເປັນປະທານກ່າວເປີດ
ແລະ ປິດ ຂອງສະຫາຍ ກອງມີ ສຸດເທດລັດ ປະທານກຳມະບານຮາກຖານ ພວຕ
,
ໃຫ້ກຽດເຂົ້າມີ ສະຫາຍ ປອ ສົມຄິດ ວົງປັນຍາ ຮອງປະທານ ຄະນະບໍລິຫານງານ
ສະຫະພັນກໍາມະບານແຂວງ
,
ສະຫາຍ ໄພວັນ ສ້ອຍທອງ ຮອງເລຂາໜ່ວຍພັກ ພວຕ
,
ຜູ້ແທນສົມບູນເຂົ້າຮ່ວມ ຈຳນວນ
27
ສະຫານ
,
ຍິງ:
11
ສະຫາຍ ແລະ ມີແຂກຮັບເຊີນ ຈຳນວນ
7
ສະຫາຍ.
ກອງປະຊຸມ ໄດ້ຮັບຟັງບົດລາຍງານການເມືອງ 2 ພາກ ຂອງຄະນະປະທານກຳມະບານຮາກຖານ ພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີແຂວງ
ກ່ຽວກັບການສະຫຼຸບຕິລາຄາສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ່
II
ແລະ ທິດທາງແຜນການ ວຽກງານກຳມະບານໃນ
5
ປີ ຕໍ່ໜ້າ (ແຕ່ປີ
2019-2023)
, ຮັບຟັງການລາຍງານ ບົດສຳຫຼວດການນຳພາ ຂອງຄະນະປະທານກຳມະບານຮາກຖານ ຊຸດເກົ່າ
ເຊິ່ງໄດ້ຕີລາຄາໃນການຊີ້ນຳນຳພາຂອງຄະນະກຳມະບານ ແລະ ການຊີ້ນຳນຳພາ
ຂອງສະມາຊິກກຳມະບານ-ພະນັກງານລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ
ຕໍ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍ ເວົ້າລວມ
,
 1 / 3

ໜ່ວຍກໍາມະບານຮາກຖານ ພວຕ ບໍ່ແກ້ວ ສໍາເລັດກອງປະຊຸມໃຫຍ່ຄັ້ງທີ່ 2
Written by Administrator
Thursday, 11 July 2019 01:26 - Last Updated Wednesday, 10 February 2021 07:07
ເວົ້າສະເພາະແມ່ນການນຳພາຈັດຕັ້ງປະຕິບັດວຽກງານກຳມະບານໃນໄລຍະຜ່ານມາ
,
ເຊິ່ງໄດ້ຮັບໝາກຜົນຕົວຈິງ ໃນຫຼາຍດ້ານແຕ່ກໍຍັງມີບາງບັນຫາ
ທີ່ເປັນຈຸດອ່ອນ-ຂໍ້ຄົງຄ້າງ ໃຫ້ແກ່ຄະນະກຳມະບານຮາກຖານ ຊຸດໃໝ່
ເພື່ອນຳໄປສືບຕໍ່ຈັດຕັ້ງຜັນຂະຫຍາຍ ແລະ ປັບປຸ່ງແກ້ໄຂ.

ຈາກນັ້ນຜູ້ແທນກອງປະຊຸມ ໃນຈໍານວນ 27 ສະຫາຍ ໄດ້ໃຊ້ສິດປະຊາທີປະໄຕຂອງຕົນ
ເລືອກຕັ້ງເອົາຄະນະກຳມະບານຮາກຖານ ຊຸດໃໝ່ ໃນຈໍານວນຜູ້ສະໜັກ 5 ສະຫາຍ, ເລືອກເອົາ 3
ສະຫາຍ, ຜົນການເລືອກຕັ້ງ ແລະ ໄດ້ຕົກລົງເປັນເອກະສັນກັນຢ່າງສົົມບູນ
ເລືອກເອົາຄະນະກໍາມະບານຊຸດໃໝ່ຄື: 1.ສະຫາຍ ຄໍາສຸກ ອານັນລັດ ເປັນປະທານ ຊີ້ນຳລວມ
ຮັບຜິດຊອບວຽກງານການເມືອງ-ແນວຄິດ ແລະ ວຽກງານຈັດຕັ້ງ,
2.
ສະຫາຍ ວິໄລເອກ ໄຊສະຫງວນ ເປັນຮອງປະທານ ຮັບຜິດຊອບວຽກງານກວດກາ ແລະ
ວຽກງານຂະບວນການ-ຍ້ອງຍໍ,
3.
ສະຫາຍ ສົມພານ ຈັນດາລາ ເປັນຮອງປະທານ ຮັບຜິດຊອບ
ວຽກງານວຽກງານປົກປ້ອງຊິດຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ ແລະ ວຽກງານການເງິນ.
ກອງປະຊຸມດັ່ງກ່າວໄດ້ຖືເອົາ ການມອບ-ຮັບ ໃບຢັ້ງຢືນ ກໍາມະບານ 5 ເປັນເຈົ້າ,
ໃບຍ້ອງຍໍຜົນງານກົມກອງ ແລະ ໃບຍ້ອງຍໍຜົນງານ ສະມາຊິກກໍາມະບານພາຍໃນໜ່ວຍ ຈໍານວນ 20
ສະຫາຍ ເປັນກຽດມອບໂດຍ ສະຫາຍ ປອ ຄົມຄິດ ວົງປັນຍາ ຮອງປະທານ ຄະນະບໍລິຫານງານ
ສະຫະພັນກໍາມະບານແຂວງ.

ຕ້ອນທ້າຍກອງປະຊູມໃຫຍ່ຍັງໄດ້ຮັບຟັງຄຳເຫັນຊີ້ນຳຈາກ ສະຫາຍ ປອ ສົມຄິດ ວົງປັນຍາ
ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານແຂວງ ເຊີ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ
ຕໍ່ຜົນງານທີ່ທາງ ຮາກຖານ ກຳມະບານ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ
ຍາດມາໄດ້ໃນຊຸມປີຜ່ານມາ ແລະ ໄດ້ສະແດງຄວາມເປັນຫ່ວງເປັນໄຍ ໃຫ້ຄຳຕັກເຕືອນ , ຊີ້ທິດເຍືອ
ງທາງໃນການຈັດຕັ້ງນຳພາ ແລະ ການປະຕິບັດໜ້າທີ່ການເມືອງຂອງກຳມະບານຮາກຖານໃນຕໍ່ໜ້າ
ໃຫ້ໄປຕາມແນວທາງການປ່ຽນໃໝ່ຂອງພັກ
,
ເປັນເຈົ້າການໃນການປະຕິບັດພາລະບົດບາດ
,
ສິດ ແລະ ໜ້າທີ່ຂອງຕົນໃຫ້ມີຜົນສຳເລັດ ແລະ ສະແດງຄວາມຍ້ອງຍໍ ຊົມເຊີຍ
ຕໍ່ສະມາຊິກກຳມະບານ
,
ພະນັກງານ-ລັດຖະກອນ
,
ອົງການຈັດຕັ້ງມະຫາຊົນ
,
ທີ່ໄດ້ປະກອບສວນທາງດ້ານສະຕິບັນຍາ
 2 / 3

ໜ່ວຍກໍາມະບານຮາກຖານ ພວຕ ບໍ່ແກ້ວ ສໍາເລັດກອງປະຊຸມໃຫຍ່ຄັ້ງທີ່ 2
Written by Administrator
Thursday, 11 July 2019 01:26 - Last Updated Wednesday, 10 February 2021 07:07
,
ເຂົ້າໃນການກະຕຸກຊູກຍູ້ ພັດທະນາວຽກງານທາງດ້ານວິຊາສະເພາະໃນຊຸມປີຜ່ານມາ ກໍຄືປະຈຸບັນ
,
ໂດຍສະເພາະ ແມ່ນການປະສ່ວນໃຫ້ແກ່ຜົນສຳເລັດຂອງກອງປະຊຸມໃຫຍ່ໃນຄັ້ງນີ້.

ສະຫາຍຍັງໄດ້ຮຽກຮ້ອງມາຍັງຖັນແຖວ ສະມາຊິກກຳມະບານ , ພະນັກງານ-ລັດທະກອນ ໃນຮາກຖານ
ຈົ່ງເພິ່ມທະວີ ຄວາມສາມັກຄີເປັນເອກະພາບ
,
ເສີມຂະຫຍາຍມູນເຊື້ອຂອງຕົນເຂົ້າໃນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ
II
ນີ້ ໃຫ້ມີຜົນສຳເລັດບົນຈິດໃຈເອກະພາບ
,
ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ສຶບຕໍ່ຮັກສາມູນເຊື້ອ
ກໍາມະບານຮາກຖານ 5 ເປັນເຈົ້າໃນສະໄໝຕໍ່ໆໄປຈົນກ້າວໄປສູ່ການຮັບທຸງໄຊ.

ຂ່າວ ແລະ ພາບໂດຍ: ຂະແໜງໄອທີ
 3 / 3